**ມິຊຊາສົມໂພດພຣະຈິດເຈົ້າສະເດັດລົງມາ**

**ວັນທີ 28 ພຶດສະພາ 2023**



**ພຣະວໍລະສານໂດຍນັກບຸນຢວງ 20, 19-23**

ແລງວັນນັ້ນເອງ, ທີ່ເປັນວັນທີຕົ້ນສັບປະດາ, ປະຕູຫ້ອງບ່ອນພວກສາວົກປະຊຸມກັນຢູ່ປິດໝົດທຸກປ່ອງຍ້ອນຢ້ານພວກຢູເດວ. ພຣະເຢຊູເຈົ້າສະເດັດມາຢືນຢູ່ກາງພວກເຂົາແລ້ວກ່າວແກ່ພວກເຂົາວ່າ: "ສັນຕິສຸກຈົ່ງມີແດ່ພວກເຈົ້າ". ເມື່ອໄດ້ກ່າວດັ່ງນີ້ແລ້ວ ພຣະອົງໄດ້ຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກເຂົາເຫັນ; ພວກສາວົກຈຶ່ງຮູ້ສຶກຍິນດີດ້ວຍໄດ້ເຫັນພຣະອົງເຈົ້າ.

ພຣະອົງຍັງຊົງກ່າວແກ່ພວກເຂົາອີກວ່າ: "ສັນຕິສຸກຈົ່ງມີແດ່ພວກເຈົ້າ" ພຣະບິດາໄດ້ຊົງໃຊ້ເຮົາມາແນວໃດ ເຮົາກໍໃຊ້ພວກເຈົ້າໄປແນວນັ້ນດ້ວຍ. ເມື່ອກ່າວແລ້ວ ພຣະອົງກໍໄດ້ຊົງເປົ່າໃສ່ພວກເຂົາແລ້ວກ່າວວ່າ: "ຈົ່ງຮັບພຣະຈິດເຈົ້າ" ພວກເຈົ້າຈະໂຜດຍົກບາບໃຫ້ຜູ້ໃດ ບາບຂອງຜູ້ນັ້ນກໍຈະຫລຸດພົ້ນໄປ. ພວກເຈົ້າຈະໜ່ວງຈ່ອງບາບຂອງຜູ້ໃດໄວ້ ບາບຂອງຜູ້ນັ້ນກໍຈະຄ້າງຄາຢູ່.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 20, 19-23**

ວັນນີ້ພຣະກຣິສຕະຈັກສົມໂພດພຣະຈິດເຈົ້າສະເດັດລົງມາ ແລະກໍແມ່ນວັນສະຫລຸບກໍານົດປາສກາດ້ວຍ. ວາຈາພຣະເຈົ້າໂດຍນັກບຸນຢວງໄດ້ເລົ່າໃຫ້ພວກເຮົາຮູ້ວ່າພຣະເຢຊູເຈົ້າຜູ້ກັບເປັນຄືນມາຈາກຄວາມຕາຍໄດ້ປະຈັກມາຫາພວກລູກສິດຕອນແລງຂອງວັນຕົ້ນສັບປະດັບ. ແລະພຣະອົງກໍໄດ້ປະທານພຣະຈິດຂອງພຣະອົງໃຫ້ພວກລູກສິດໃນແລງວັນນັ້ນເອງ. ເປັນຫຍັງນັກບຸນຢວງຈຶ່ງຢາກເນັ້ນໃຫ້ພວກເຮົາຮູ້ວ່າແມ່ນຕອນແລງຂອງວັນຕົ້ນອາທິດ? ອາດຈະແມ່ນສໍາລັບຊາວຢິວ ວັນຕົ້ນສັບປະດາເລີ່ມຕົ້ນແຕ່ຕອນແລງຂອງວັນເສົາ, ວັນສາບາໂຕແລ້ວ. ເຫດຜົນທີສອງ, ນັກບຸນຢວງອາດຢາກໃຫ້ພວກເຮົາຄິດຫາແຜນການສ້າງໂລກຂອງພຣະເຈົ້າໃນປື້ມປະຖົມມະການ. ເມື່ອພຣະເຈົ້າສ້າງເວລາຂອງແຕ່ລະວັນ, ພຣະອົງເລີ່ມຕົ້ນຈາກກາງຄືນຫາກາງເວັນຊຶ່ງແມ່ນວັນທີໜຶ່ງ, ທີສອງ, ທີສາມແລະຕໍ່ໆໄປ. ແລະເມື່ອພຣະເຈົ້າສ້າງມະນຸດ, ພຣະອົງໄດ້ປັ້ນເຂົາຂຶ້ນມາຈາກດິນໜຽວແລະໄດ້ເປົ່າລົມຂອງພຣະອົງໃສ່ປາກຂອງເຂົາແລະເຂົາກໍມີຊີວິດ.

ວັນນີ້ໃນພຣະທໍາໃໝ່, ພຣະເຢຊູເຈົ້າກໍໄດ້ເປົ່າລົມແຫ່ງຈິດຂອງພຣະອົງໃສ່ພວກລູກສິດ. ແລະພາລະກິດແຫ່ງພຣະກຣິສຕະຈັກກໍໄດ້ເລີ່ມຕົ້ນຂຶ້ນ. ພຣະບິດາໄດ້ສົ່ງພຣະເຢຊູເຈົ້າມາໃນໂລກນີ້ເພື່ອທໍາໃຫ້ພາລະກິດແຫ່ງການກູ້ໄຖ່ຂອງພຣະອົງສໍາເລັດໄປຢ່າງໃດ. ວັນນີ້, ພຣະເຢຊູເຈົ້າກໍໄດ້ຖ່າຍທອດພາລະກິດນັ້ນໃຫ້ພວກລູກສິດຢ່າງນັ້ນດ້ວຍ. ດັ່ງທີ່ພຣະອົງກ່າວກັບພວກເຂົາວ່າ: “ພຣະບິດາໄດ້ຊົງໃຊ້ເຮົາມາແນວໃດ ເຮົາກໍໃຊ້ພວກເຈົ້າໄປແນວນັ້ນ”. ພາລະກິດທີ່ພວກລູກສິດຈະກະທໍາແມ່ນການເປັນເຄື່ອງມືແຫ່ງການໃຫ້ອະໄພຂອງພຣະເຢຊູເຈົ້າ. ດັ່ງທີ່ພຣະອົງກ່າວກັບພວກເຂົາວ່າ: “ພວກເຈົ້າຈະໂຜດຍົກບາບໃຫ້ຜູ້ໃດ ບາບຂອງຜູ້ນັ້ນກໍຈະຫລຸດພົ້ນໄປ. ພວກເຈົ້າຈະໜ່ວງຈ່ອງບາບຂອງຜູ້ໃດໄວ້ ບາບຂອງຜູ້ນັ້ນກໍຈະຄ້າງຄາຢູ່”. ໝາຍວ່າເມື່ອພວກລູກສິດຮັບພຣະຈິດເຈົ້າແລ້ວ ພວກເຂົາກໍໄດ້ກາຍເປັນພຣະກຣິສອີກອົງໜຶ່ງໃນແຜ່ນດິນນີ້ ເພື່ອນໍາເອົາການໃຫ້ອະໄພຂອງພຣະອົງໃຫ້ກັບທຸກຄົນ.

ສໍາລັບພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າໂດຍທາງສິນລ້າງບາບ ແລະພວກເຮົາກໍໄດ້ຮັບພຣະຈິດຂອງພຣະອົງໃນວັນທີ່ພວກເຮົາຮັບສິນກໍາລັງ, ພວກເຮົາໄດ້ເປັນພິຍານເຖິງພຣະອົງໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ສືບຕໍ່ພາລະກິດຂອງພຣະເຢຊູເຈົ້າໂດຍການເປັນຜູ້ນໍາສັນຕິແລະການໃຫ້ອະໄພຂອງພຣະອົງໃຫ້ຄົນອື່ນບໍ?

ຂໍໃຫ້ພຣະຈິດເຈົ້າຜູ້ສະເດັດລົງມາວັນນີ້ເໜືອພວກເຮົາ, ຈົ່ງລື້ຟື້ນຈິດໃຈພວກເຮົາຄືນໃໝ່. ເພື່ອພວກເຮົາຈະໄດ້ມີພະລັງແຮງແລະຄວາມກ້າຫານໃນການເປັນພິຍານເຖິງພຣະເຢຊູເຈົ້າຜູ້ກັບເປັນຄືນມາ. ແລະເປັນຕົ້ນພວກເຮົາຈະໄດ້ເປັນເຄື່ອງມືແຫ່ງສັນຕິແລະການໃຫ້ອະໄພຂອງພຣະອົງໃຫ້ກັບຄົນອື່ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ